ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 13 ຫາ 17 ມັງກອນ 2025



ແຂວງອັດຕະປື ປຶກສາຫາລືວຽກງານກັບກະຊວງກະສິກຳ ແລະ ປ່າໄມ້

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ແຂວງອັດຕະປື ປຶກສາຫາລືວຽກງານກັບກະຊວງກະສິກຳ ແລະ ປ່າໄມ້

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 08 ມັງກອນ 2025 ທີ່ກະຊວງກະສິກຳ ແລະ ປ່າໄມ້ ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ຕ້ອນຮັບການຢ້ຽມຢາມພົບປະ ຂອງທ່ານ ພົທ ວັນທອງ ກອງມະນີ, ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆ ອັດຕະປື ໃນໄລຍະທີ່ເດີນທາງມາຮ່ວມກອງປະຊຸມ ລັດຖະບານເປີດກວ້າງ ຄັ້ງທີ II ປີ 2024 ທີ່ນະຄອນຫຼວງວຽງຈັນ

ການພົບປະຄັ້ງນີ້ ທັງສອງຝ່າຍໄດ້ແລກປ່ຽນຄຳຄິດເຫັນ ແລະ ປຶກສາຫາລື ກ່ຽວກັບ ວຽກງານໃນຂົງເຂດກະສິກຳ ແລະ ປ່າໄມ້ ໂດຍທ່ານເຈົ້າແຂວງໄດ້ສະເໜີໃຫ້ຮູ້ ກ່ຽວກັບ ທິດທາງ ແລະ ເປົ້າໝາຍໃນການພັດທະນາວຽກງານກະສິກຳ-ປ່າໄມ້ ຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງປະຊາ ຊົນພາຍໃນແຂວງອັດຕະປື ເປັນຕົ້ນແມ່ນ ການແກ້ໄຂບັນຫາການບຸກລຸກທີ່ດິນປ່າໄມ້, ການຂະຫຍາຍພື້ນທີ່ການປູກໄມ້ໃຫ້ໝາກ ທີ່ເປັນພືດເສດຖະກິດ (ເຊັ່ນ ໝາກຖົ່ວລຽນ ທີ່ສາມາດສ້າງລາຍຮັບ ໄດ້ເຖິງ 900 ລ້ານກວ່າກີບຕໍ່ເຮັກຕາ), ການກຳນົດ ແລະ ຈັດສັນພື້ນທີ່ເຂດການປູກການລ້ຽງຂອງແຂວງ ໃຫ້ແທດເໝາະກັບສະພາບພື້ນທີ່ ແລະ ທ່າແຮງ. ທ່ານໄດ້ສະເໜີໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ຊ່ວຍສະໜັບສະໜູນ ທາງດ້ານເຕັກນິກວິຊາການ ເພື່ອໃຫ້ປະຊາຊົນ ແຂວງ ອັດຕະປື ມີຄວາມຮູ້ ມີຄວາມສາມາດຜະລິດ ແລະ ສ້າງລາຍຮັບດ້ວຍຕົວເຂົາເຈົ້າເອງຢ່າງຍືນຍົງ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ ທັງເປັນການປະກອບສ່ວນພັດທະນາຊົນນະບົດ ແລະ ສ້າງເສດຖະກິດຂອງແຂວງ ກໍຄືເສດຖະກິດແຫ່ງຊາດໄປພ້ອມໆກັນ.



ທ່ານເຈົ້າແຂວງ ໄດ້ເນັ້ນໜັກໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຊ່ວຍໃນການ ດຳເນີນການກຳນົດຂອບເຂດ 3 ປະເພດປ່າ ແລະ ທີ່ດິນກະສິກຳ ຂອງແຂວງ ຄືນໃໝ່, ໂດຍສະເພາະ ເນັ້ນໃສ່ ການກຳນົດຂອບເຂດ 3 ປະເພດປ່າ ຢູ່ ເມືອງສະໜາມໄຊ ໃຫ້ສຳເລັດ ໃນປີ 2025 ເພື່ອເປັນຕົວແບບ ໃນການຜັນຂະຫຍາຍສູ່ເຂດອື່ນ.

ໃນໂອກາດການພົບປະຄັ້ງນີ້ ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເຫັນດີຕໍ່ການນຳສະເໜີ ໂດຍໃຫ້ມີການປະສານສົມທົບຂອງພະແນກການ ແລະ ກົມວິຊາການທີ່ກ່ຽວຂ້ອງໂດຍສະເພາະການກຳນົດຂອບເຂດພື້ນທີ່ 3 ປະເພດປ່າ ແລະ ທີ່ດິນກະສິກຳ ຢູ່ ແຂວງອັດຕະປື ໂດຍສະເພາະ ໃນເມືອງສະໜາມໄຊ ທີ່ໄລຍະຜ່ານມາໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ ແລະ ໄດ້ມອບຂໍ້ມູນແຜນທີ່ ການກຳນົດແບ່ງເຂດທີ່ດິນກະສິກຳ ຮອດປີ 2030 ແລະ ແຜນທີ່ ການກຳນົດທີ່ຕັ້ງ 3 ປະເພດປ່າຂອງແຂວງອັດຕະປື ເຊິ່ງເປັນຂໍ້ມູນອັນສຳຄັນທີ່ເປັນພື້ນຖານ ສຳລັບການກຳນົດ ແລະ ວາງແຜນ ການນຳໃຊ້ທີ່ດິນ ໃຫ້ແຂວງອັດຕະປືນຳອີກ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;